ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ພິທີປາຖະກະຖາວັນຜ່າວົງປິດລ້ອມຂອງກອງພັນທີ 2 ຄົບຮອບ 64 ປີ ແລະ ວິລະກຳໂຕນຄຸກຂອງບັນດາຜູ້ນຳຂອງພັກ ແລະ ແນວລາວຮັກຊາດ ຄົບຮອບ 63 ປີ




ໃນວັນທີ 30 ມິຖຸນາ 2023 ທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີປາຖະກະຖາວັນຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນ ທີ່ທົ່ງໄຫຫີນ ຊຽງຂວາງ ຄົບຮອບ 64 ປີ ແລະ ວິລະກຳໂຕນຄຸກຂອງບັນດາຜູ້ນຳຂອງພັກ ແລະ ແນວລາວຮັກຊາດ ຄົບຮອບ 63 ປີ ຂຶ້ນ, ໂດຍການໃຫ້ກຽດບັນຍາຍຂອງສະຫາຍ ພິຈອ ອ່ອນຈັນ ເພັດສະລາດ ອາດີດຮອງອົງການໄອຍະການປະຊາຊົນສູງສຸດ ແລະ ອາດີດຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຊຶ່ງເຂົ້າຮ່ວມຮັບຟັງມີ ຄະນະບໍລິຫານງານພັກ ທຫລ, ຄະນະໜ່ວຍພັກ, ຄະນະພັກຮາກຖານ, ຄະນະກົມ-ທຽບເທົ່າ ແລະ ຕ່າງໜ້າຈາກບັນດາທະນາຄານ ທຸລະກິດ ເຂົ້າຮ່ວມຢ່າງພ້ອມພຽງ.



 

ຈຸດປະສົງຂອງການຈັດພິທີປາຖະກະຖາໃນຄັ້ງນີ້ ເພື່ອທວນຄືນມູນເຊື້ອ ແລະ ລະນຶກເຖິງເຫດການສຳຄັນທາງດ້ານປະຫວັດສາດ ຂອງຊາດລາວເຮົາ, ມູນເຊື້ອການຕໍ່ສູ້ອັນພິລະອາດຫານ, ຜົນງານອັນໃຫຍ່ຫຼວງຂອງກອງພັນທີ 2 ວິລະຊົນທີ່ທົ່ງໄຫຫີນ ຊຽງຂວາງ ແລະ ວິລະກຳໂຕນຖຸກຢ່າງມະຫັດສະຈັນຂອງບັນດາຜູ້ນຳຂອງພັກ ແລະ ແນວລາວຮັກຊາດ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ສະມາຊິກພັກ - ພະນັກງານ ໄດ້ຮັບຮູ້ ແລະ ເຊື່ອມຊຶມມູນເຊື້ອປະຕິວັດ ເພື່ອນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນການດຳລົງຊີວິດ ແລະ ການປະຕິບັດວຽກງານ ຂອງຂະແໜງການທະນາຄານ ເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ກ້າວຂຶ້ນເລື້ອຍໆ ແລະ ຍືນຍົງຕະຫຼອດໄປ.

ພິທີປາຖະກະຖາວັນຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນ ທີ່ທົ່ງໄຫຫີນ ຊຽງຂວາງ ຄົບຮອບ 64 ປີ ແລະ ວິລະກຳໂຕນຖຸກຂອງບັນດາຜູ້ນຳຂອງພັກ ແລະ ແນວລາວຮັກຊາດ ຄົບຮອບ 63 ປີ ຢູ່ຂະແໜງການທະນາຄານ ແມ່ນໄດ້ດຳເນີນເປັນເວລາເຄິ່ງວັນດ້ວຍບັນຍາກາດອັນຟົດຟື້ນ ແລະ ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ຂ່າວ-ພາບ: ສົມພິດ ທຳມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*